ສຳນັກງານ ຄຄຊ
ເລກທີ 0061
ວັນທີ 18 JAN 2019
ໂທລະສັບ 021 217770

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ
ຫ້ອງການ

ເລກທີ 12 /ຫກ
ນະຄອນຫຼວງວຽງຈັນ, ວັນທີ 16 ມັງກອນ 2019

# ແຈ້ງການ

**ເຖິງ:** - ບັນດາກົມ-ທຽບເທົ່າກົມພາຍໃນ ແລະ ສາຂາປະຈຳພາກ ຂອງທະນາຄານແຫ່ງ ສປປ ລາວ;
- ບັນດາທະນາຄານທຸລະກິດລັດ, ທະນາຄານທຸລະກິດລັດຫຸ້ນສ່ວນ, ທະນາຄານເອກະຊົນ, ທະນາຄານຕ່າງປະເທດ ແລະ ສາຂາທະນາຄານຕ່າງປະເທດ;
- ບັນດາສະຖາບັນການເງິນຈຸລະພາກປະເພດຕ່າງໆ.

**ເລື່ອງ:** ແຈ້ງການກ່ຽວກັບ ມະຕິສະພາແຫ່ງຊາດ ວ່າດ້ວຍການຮັບຮອງຊົນເຜົ່າບຣູ.

- ອີງຕາມແຈ້ງການຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ສະບັບເລກທີ 2145/ຫສນຍ; ລົງວັນທີ 19 ທັນວາ 2018.

ຫ້ອງການ ທະນາຄານແຫ່ງ ສປປ ລາວ ຂໍຖືເປັນກຽດແຈ້ງມາຍັງທ່ານຊາບວ່າ: ຊົນເຜົ່າບຣູ ໄດ້ຖືກຮັບຮອງເປັນໜຶ່ງໃນບັນດາຊົນເຜົ່າ ຂອງ ສປປ ລາວ ແລະ ຈັດຢູ່ໃນໝວດພາສາມອນ-ຂະແມ. ຊຶ່ງເຮັດໃຫ້ປັດຈຸບັນຈຳນວນຊົນເຜົ່າໃນ ສປປ ລາວ ເພີ່ມຂຶ້ນຈາກ 49 ຊົນເຜົ່າ ມາເປັນ 50 ຊົນເຜົ່າ ຕາມມະຕິສະພາແຫ່ງຊາດ ສະບັບເລກທີ 108/ສພຊ; ລົງວັນທີ 05 ທັນວາ 2018. (ໄດ້ຄັດຕິດມະຕິດັ່ງກ່າວມາພ້ອມນີ້).

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຊາບ.

ຮ. ຫົວໜ້າຫ້ອງການ

ທະນາຄານແຫ່ງ ສປປ ລາວ ຫ້ອງການ

ສຸກັນ ຈັນທະວົງ

ບ່ອນນຳສົ່ງ:
- ຄະນະຜູ້ວ່າການ ທຫລ 01 ສະບັບ ເພື່ອຊາບ
- ສຳເນົາເກັບມ້ຽນ 01 ສະບັບ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ເລກທີ 108 /ສພຊ

ນະຄອນຫຼວງວຽງຈັນ, ວັນທີ 05 / 12 / 18

## ມະຕິ
## ຂອງກອງປະຊຸມສະພາແຫ່ງຊາດ
## ວ່າດ້ວຍການຮັບຮອງ ຊົນເຜົ່າ ບຣຸ

– ອີງຕາມ ລັດຖະທຳມະນູນ ມາດຕາ 52 ກ່ຽວກັບພາລະບົດບາດ ຂອງສະພາແຫ່ງຊາດ ໃນການພິຈາລະນາຕົກລົງບັນຫາສຳຄັນພື້ນຖານຂອງປະເທດຊາດ;

– ອີງຕາມ ໜັງສືສະເໜີຂອງນາຍົກລັດຖະມົນຕີ ສະບັບເລກທີ 152/ນຍ, ລົງວັນທີ 12 ພະຈິກ 2018;

– ອີງຕາມ ບົດສະເໜີຂອງລັດຖະບານ ກ່ຽວກັບການພິຈາລະນາ ຮັບຮອງຊົນເຜົ່າ ບຣຸ ຕໍ່ກອງປະຊຸມສະໄໝສາມັນ ເທື່ອທີ 6 ສະພາແຫ່ງຊາດ ຊຸດທີ VIII.

ຜ່ານການຄົ້ນຄວ້າ, ພິຈາລະນາຢ່າງກວ້າງຂວາງ ແລະ ປະກອບຄຳເຫັນເລິກເຊິ່ງຂອງບັນດາທ່ານສະມາຊິກສະພາແຫ່ງຊາດ ຕໍ່ບົດສະເໜີຂອງລັດຖະມົນຕີກະຊວງພາຍໃນ ຕາງໜ້າໃຫ້ລັດຖະບານກ່ຽວກັບການສະເໜີພິຈາລະນາ ຮັບຮອງຊົນເຜົ່າ ບຣຸ ແລະ ບົດປະກອບຄຳເຫັນຂອງຄະນະປະຈຳສະພາແຫ່ງຊາດ ຕາມວາລະກອງປະຊຸມສະໄໝສາມັນ ເທື່ອທີ 6 ຂອງສະພາແຫ່ງຊາດ ຊຸດທີ VIII ໃນຕອນເຊົ້າ ວັນທີ 5 ທັນວາ 2018.

### ກອງປະຊຸມຕົກລົງ:

ມາດຕາ 1 ຮັບຮອງ ຊົນເຜົ່າ ບຣຸ ຈັດຢູ່ໃນໝວດພາສາມອນ-ຂະແມ;

ມາດຕາ 2 ຮັບຮອງຈຳນວນຊົນເຜົ່າໃນ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຈາກ 49 ຊົນເຜົ່າ ມາເປັນ 50 ຊົນເຜົ່າ;

ມາດຕາ 3 ມອບໃຫ້ລັດຖະບານ, ສູນກາງແນວລາວສ້າງຊາດ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດມະຕິສະບັບນີ້ຢ່າງເຂັ້ມງວດ;

ມາດຕາ 4 ມອບໃຫ້ຄະນະປະຈຳສະພາແຫ່ງຊາດ, ກຳມາທິການບັນດາເຜົ່າ, ສະພາປະຊາຊົນຂັ້ນແຂວງ, ສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງທີ່ກ່ຽວຂ້ອງເອົາໃຈໃສ່ຕິດຕາມກວດກາການຈັດຕັ້ງປະຕິບັດມະຕິສະບັບນີ້ ຕາມພາລະບົດບາດ ແລະ ຂອບເຂດສິດໜ້າທີ່ຂອງຕົນຢ່າງເຂັ້ມງວດ;

ມາດຕາ 5 ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ປະທານສະພາແຫ່ງຊາດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ★ ປະທານສະພາແຫ່ງຊາດ ★

ປານີ ຢາທໍ່ຕູ້

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ເລກທີ 2145/ຫສນຍ

ນະຄອນຫລວງວຽງຈັນ, ວັນທີ 19-12-2018

ຄານແຫ່ງ ສປປ ລາວ
ຮັບ ເລກທີ: 3349
ວັນທີ: 25/12/2018
ໂທລະສັບ: 243710

## ແຈ້ງການ

ຮຽນ : - ບັນດາທ່ານ ລັດຖະມົນຕີ ແລະ ຫົວໜ້າອົງການລັດທຽບເທົ່າກະຊວງ.

- ທ່ານ ເຈົ້າຄອງນະຄອນຫລວງວຽງຈັນ ແລະ ບັນດາທ່ານ ເຈົ້າແຂວງ ໃນທົ່ວປະເທດ.

ເລື່ອງ : ການແຈ້ງກ່ຽວກັບ ມະຕິສະພາແຫ່ງຊາດ ວ່າດ້ວຍການຮັບຮອງ ຊົນເຜົ່າບຣູ.

- ອີງຕາມມະຕິ ຂອງກອງປະຊຸມສະໄໝສາມັນ ເທື່ອທີ 6 ຂອງສະພາແຫ່ງຊາດ ຊຸດທີ VIII ສະບັບເລກທີ 108/ສພຊ, ລົງວັນທີ 05 ທັນວາ 2018.

ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ຂໍຖືເປັນກຽດແຈ້ງມາຍັງທ່ານຊາບ ດັ່ງນີ້ : ກອງປະຊຸມສະໄໝສາມັນ ເທື່ອທີ 6 ຂອງສະພາແຫ່ງຊາດ ຊຸດທີ VIII ໄດ້ຮັບຮອງເອົາຊົນເຜົ່າບຣູ ຈັດຢູ່ໃນໝວດພາສາມອນ-ຂະແມ ເປັນໜຶ່ງໃນບັນດາຊົນເຜົ່າ ຂອງ ສປປ ລາວ ແລະ ໄດ້ຮັບຮອງເອົາຈຳນວນຊົນເຜົ່າ ໃນ ສປປ ລາວ ຈາກ 49 ຊົນເຜົ່າ ມາເປັນ 50 ຊົນເຜົ່າ ຕາມມະຕິສະພາແຫ່ງຊາດ ສະບັບເລກທີ 108/ສພຊ, ລົງວັນທີ 05 ທັນວາ 2018.

<u>ໝາຍເຫດ:</u> ໄດ້ມີມະຕິດັ່ງກ່າວ ຄັດຕິດມາພ້ອມນີ້.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຊາບຕາມທາງຄວນດ້ວຍ.

ລັດຖະມົນຕີ,
ຫົວໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ

<u>ບ່ອນນຳສົ່ງ:</u>

| | |
|---|---|
| 1. ນາຍົກ-ຮອງນາຍົກລັດຖະມົນຕີ | 04 ສະບັບ |
| 2. ຫ້ອງວ່າການສູນກາງພັກ | 01 ສະບັບ |
| 3. ຄະນະ ຫສນຍ | 06 ສະບັບ |
| 4. ສູນກາງແນວລາວສ້າງຊາດ | 01 ສະບັບ |
| 5. ອົງການຈັດຕັ້ງມະຫາຊົນ | 03 ສະບັບ |
| 6. ອົງການຈັດຕັ້ງພັກ | 01 ສະບັບ |
| 7. ກົມກວດກາ, ຫສນຍ | 01 ສະບັບ |
| 8. ສຳເນົາ | 01 ສະບັບ |

ສຳນັກງານນາຍົກລັດຖະມົນຕີ

ເພັດ ພົມພິພັກ